ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 04 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 04 JAN 2019

# ຂໍ້ຕົກລົງ
# ວ່າດ້ວຍສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ (FX Options)

– ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
– ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
– ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014.
– ອີງຕາມການຄົ້ນຄ້ວາ ແລະ ການນໍາສະເໜີຂອງກົມນະໂຍບາຍເງິນຕາ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກໍານົດຫຼັກການ, ກົນໄກ ແລະ ເງື່ອນໄຂພື້ນຖານໃນການດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດໃນການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດສັນຍາດັ່ງກ່າວ.

**ມາດຕາ 2 ອະທິບາຍຄໍາສັບ**

ຄໍາສັບໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້;

1. "FX Options" ຫຍໍ້ມາຈາກ Foreign Exchange Options ໝາຍເຖິງ ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ;
2. "ຝ່າຍຊື້" ໝາຍເຖິງ ຜູ້ທີ່ສະເໜີຂໍຊື້ສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຈາກຝ່າຍຂາຍ;
3. "ຝ່າຍຂາຍ" ໝາຍເຖິງ ຜູ້ທີ່ຂາຍສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດໃຫ້ແກ່ຝ່າຍຊື້;
4. "ອັດຕາໃຊ້ສິດ" ໝາຍເຖິງອັດຕາແລກປ່ຽນທີ່ຈະຊື້ ຫຼື ຂາຍເງິນຕາຕ່າງປະເທດໃນອະນາຄົດ, ຊຶ່ງຝ່າຍຂາຍຈະເປັນຜູ້ກໍານົດອັດຕາແລກປ່ຽນທີ່ຈະໃຊ້ສິດດັ່ງກ່າວ;
5. "ລາຄາຊື້ສິດ" ໝາຍເຖິງຄ່າ Option Premium ໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ, ຊຶ່ງຝ່າຍຂາຍຈະເປັນຜູ້ກໍານົດລາຄາຊື້ສິດດັ່ງກ່າວໃນມື້ເຮັດສັນຍາ;
6. "ທະນາຄານທຸລະກິດ" ໝາຍເຖິງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ໃນ ສປປ ລາວ;

7. “ສະຖາບັນການເງິນ” ໝາຍເຖິງສະຖາບັນການເງິນຈຸລະພາກທີ່ດໍາເນີນທຸລະກໍາທາງການເງິນ ຊຶ່ງມີທັງສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ, ສະຖາບັນການເງິນຈຸລະພາກບໍ່ຮັບຝາກເງິນ ແລະ ໂຄງການການເງິນຈຸລະພາກ;
8. “ລູກຄ້າທົ່ວໄປ” ໝາຍເຖິງບຸກຄົນ ແລະ ນິຕິບຸກຄົນອື່ນທີ່ເປັນຄົນລາວ ຫຼື ຄົນຕ່າງປະເທດທີ່ຢູ່ ສປປ ລາວ ຊຶ່ງໄດ້ຮັບອະນຸຍາດດໍາເນີນທຸລະກິດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
9. “ສະກຸນເງິນທີ່ອ້າງອີງ” ໝາຍເຖິງສະກຸນເງິນຕາຕ່າງປະເທດທີ່ອະນຸຍາດໃຫ້ເຮັດທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ;
10. “FX Call Option” ໝາຍເຖິງ ສັນຍາທີ່ຝ່າຍຊື້ຕົກລົງເຮັດສັນຍາສິດໃນການຊື້ເງິນຕາຕ່າງປະເທດໃນອະນາຄົດນໍາຝ່າຍຂາຍ, ສ່ວນຝ່າຍຂາຍຕົກລົງເຮັດສັນຍາຂາຍສິດໃນການຊື້ເງິນຕາຕ່າງປະເທດດັ່ງກ່າວໃຫ້ແກ່ຝ່າຍຊື້ ໂດຍໃນສັນຍາຕ້ອງໄດ້ລະບຸສະກຸນເງິນທີ່ອ້າງອີງ, ຈໍານວນເງິນ, ອັດຕາໃຊ້ສິດ, ໄລຍະເວລາ, ມື້ເຮັດສັນຍາ, ມື້ຄົບກໍານົດຂອງສັນຍາ, ລາຄາຊື້ສິດໃນມື້ເຮັດສັນຍາ ແລະ ອື່ນໆ;
11. “FX Put Option” ໝາຍເຖິງ ສັນຍາທີ່ຝ່າຍຊື້ຕົກລົງເຮັດສັນຍາສິດໃນການຂາຍເງິນຕາຕ່າງປະເທດໃນອະນາຄົດນໍາຝ່າຍຂາຍ, ສ່ວນຝ່າຍຂາຍຕົກລົງເຮັດສັນຍາຂາຍສິດໃນການຂາຍເງິນຕາຕ່າງປະເທດດັ່ງກ່າວໃຫ້ແກ່ຝ່າຍຊື້ ໂດຍໃນສັນຍາຕ້ອງໄດ້ລະບຸສະກຸນເງິນທີ່ອ້າງອີງ, ຈໍານວນເງິນ, ອັດຕາໃຊ້ສິດ, ໄລຍະເວລາ, ມື້ເຮັດສັນຍາ, ມື້ຄົບກໍານົດຂອງສັນຍາ ແລະ ລາຄາຊື້ສິດໃນມື້ເຮັດສັນຍາ;
12. “ຕະຫຼາດລະຫວ່າງທະນາຄານ” ໝາຍເຖິງຕະຫຼາດຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດດ້ວຍກັນທີ່ເປັນສະມາຊິກຢູ່ໃນຕະຫຼາດລະຫວ່າງທະນາຄານ;
13. “ຕະຫຼາດທີ່ບໍ່ເປັນທາງການ (Over The Counter : OTC)” ໝາຍເຖິງຕະຫຼາດທີ່ມີການຕົກລົງຊື້-ຂາຍເງິນຕາຕ່າງປະເທດ ໂດຍບໍ່ຜ່ານຕົວແທນຊື້-ຂາຍ.

**ມາດຕາ 3 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດທີ່ດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຢູ່ໃນ ສປປ ລາວ.

## ໝວດທີ 2
## ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ

**ມາດຕາ 4 ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ (FX Options) ແມ່ນສັນຍາລະຫວ່າງບຸກຄົນ 2 ຝ່າຍ ຄື ຝ່າຍຊື້ ແລະ ຝ່າຍຂາຍ, ໂດຍຝ່າຍຂາຍຈະໃຫ້ສິດແກ່ຝ່າຍຊື້ໃນການແລກປ່ຽນເງິນກີບກັບສະກຸນເງິນຕາຕ່າງປະເທດທີ່ໃຊ້ອ້າງອີງ ຊຶ່ງຈະມີການສົ່ງມອບກັນໃນອະນາຄົດຕາມຈໍານວນເງິນ, ໄລຍະເວລາ ແລະ ອັດຕາແລກປ່ຽນ ຫຼື ເອີ້ນວ່າ ອັດຕາໃຊ້ສິດ ທີ່ກໍານົດໄວ້ລ່ວງໜ້າໃນມື້ເຮັດສັນຍາ.

ຝ່າຍຊື້ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຈະບໍ່ມີພັນທະຜູກພັນ, ສາມາດເລືອກທີ່ຈະໃຊ້ສິດ ຫຼື ບໍ່ໃຊ້ສິດຕາມສັນຍາກໍໄດ້, ແຕ່ສໍາລັບຝ່າຍຂາຍມີພັນທະທີ່ຈະຕ້ອງປະຕິບັດຕາມສັນຍາຫາກຝ່າຍຊື້ເລືອກທີ່ຈະໃຊ້ສິດ ຊຶ່ງຝ່າຍຂາຍບໍ່ມີສິດຍົກເລີກການຊື້ ຫຼື ຂາຍເງິນຕາຕ່າງປະເທດດັ່ງກ່າວໄດ້. ສະນັ້ນ, ເພື່ອແລກກັບການໃຊ້

ສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດດັ່ງກ່າວ ຝ່າຍຊື້ຈະຕ້ອງໄດ້ຈ່າຍເງິນຄ່າຊື້ສິດ ຫຼື ທີ່ຮຽກວ່າຄ່າ "Option Premium" ເພື່ອຄໍ້າປະກັນຄວາມສ່ຽງໃຫ້ແກ່ຝ່າຍຂາຍສັນຍາສິດໃນມື້ທີ່ເຮັດສັນຍາ.

**ມາດຕາ 5 ປະເພດຂອງສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

ສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ມີ 2 ປະເພດຄື:

- ສັນຍາສິດໃນການຊື້ເງິນຕາຕ່າງປະເທດ (FX Call Option)
- ສັນຍາສິດໃນການຂາຍເງິນຕາຕ່າງປະເທດ (FX Put Option)

**ມາດຕາ 6 ສະກຸນເງິນຕາຕ່າງປະເທດ**

ສະກຸນເງິນຕາຕ່າງປະເທດທີ່ອະນຸຍາດໃຫ້ດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ມີດັ່ງນີ້:

1. ການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ລະຫວ່າງທະນາຄານແຫ່ງ ສປປ ລາວກັບທະນາຄານທຸລະກິດ ສາມາດເຮັດໄດ້ 2 ສະກຸນເງິນຄື: ເງິນໂດລາສະຫະລັດ ແລະ ເງິນບາດ, ແຕ່ຕ້ອງເຮັດຜ່ານສະກຸນເງິນກີບທຸກທຸລະກຳ;
2. ການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດດ້ວຍກັນ ຫຼື ລະຫວ່າງທະນາຄານທຸລະກິດກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປ ສາມາດເຮັດໄດ້ຫຼາຍສະກຸນເງິນ (ເປັນຕົ້ນແມ່ນສະກຸນເງິນເອີໂຣ, ປອນ, ເຢັນ, ຢວນ ແລະ ສະກຸນເງິນອື່ນໆ) ແລ້ວແຕ່ດຸນພິນິດ ແລະ ຄວາມສາມາດຕົວຈິງຂອງທະນາຄານທຸລະກິດທີ່ເປັນຄູ່ສັນຍາເອງ, ແຕ່ຕ້ອງເຮັດຜ່ານສະກຸນເງິນກີບທຸກທຸລະກຳ.

**ມາດຕາ 7 ວົງເງິນທີ່ຈະໃຊ້ສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

ການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ຕ້ອງມີວົງເງິນດັ່ງນີ້:

- ກໍລະນີທະນາຄານແຫ່ງ ສປປ ລາວ ກັບທະນາຄານທຸລະກິດ
  1. ກໍລະນີເຮັດສັນຍາສິດໃນການຊື້ເງິນຕາຕ່າງປະເທດ
     + ສະກຸນເງິນໂດລາສະຫະລັດ: ວົງເງິນສູງສຸດບໍ່ໃຫ້ເກີນ 300.000 ໂດລາສະຫະລັດ ຕໍ່ທຸລະກຳ ຫຼື ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
     + ສະກຸນເງິນບາດ: ວົງເງິນສູງສຸດບໍ່ໃຫ້ເກີນ 10.000.000 ບາດ ຕໍ່ທຸລະກຳ ຫຼື ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ .
  2. ກໍລະນີເຮັດສັນຍາສິດໃນການຂາຍເງິນຕາຕ່າງປະເທດ
     + ສະກຸນເງິນໂດລາສະຫະລັດ: ວົງເງິນຂັ້ນຕໍ່າສຸດ ແມ່ນ 10.000 ໂດລາສະຫະລັດ ຕໍ່ທຸລະກຳ ຫຼື ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ;
     + ສະກຸນເງິນບາດ: ວົງເງິນຂັ້ນຕໍ່າສຸດ ແມ່ນ 300.000 ບາດ ຕໍ່ທຸລະກຳ ຫຼື ຕາມການອະນຸມັດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.
- ກໍລະນີທະນາຄານທຸລະກິດກັບລູກຄ້າ: ການກຳນົດວົງເງິນຂອງແຕ່ລະສະກຸນເງິນແລ້ວແຕ່ການຕົກລົງຂອງຝ່າຍຊື້ ແລະ ຝ່າຍຂາຍ.

**ມາດຕາ 8 ໄລຍະເວລາຂອງສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

- ກໍລະນີທະນາຄານແຫ່ງ ສປປ ລາວ ກັບທະນາຄານທຸລະກິດ: ການດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ໄລຍະເວລາຂອງສັນຍາ ແມ່ນ 7 ວັນ ຫາ 1 ປີ ແລ້ວແຕ່ການຕົກລົງຂອງທະນາຄານແຫ່ງ ສປປ ລາວ ແລະ ຄູ່ສັນຍາ.
- ກໍລະນີທະນາຄານທຸລະກິດກັບທະນາຄານທຸລະກິດ ຫຼື ກັບລູກຄ້າ: ການດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດແມ່ນແລ້ວແຕ່ການຕົກລົງຂອງສອງຝ່າຍ.

## ໝວດທີ 3
## ກົນໄກການເຮັດສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ

**ມາດຕາ 9 ກົນໄກການເຮັດສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

- ສໍາລັບການເຮັດທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານແຫ່ງ ສປປ ລາວ ກັບທະນາຄານທຸລະກິດນັ້ນ, ທະນາຄານແຫ່ງ ສປປ ລາວ ຈະມີຖານະເປັນຝ່າຍຂາຍ, ສ່ວນທະນາຄານທຸລະກິດຈະມີຖານະເປັນພຽງຝ່າຍຊື້ເທົ່ານັ້ນ;
- ໃນຕະຫຼາດລະຫວ່າງທະນາຄານ: ການເຮັດທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດດ້ວຍກັນທີ່ເປັນສະມາຊິກຢູ່ໃນຕະຫຼາດລະຫວ່າງທະນາຄານນັ້ນ, ທະນາຄານທຸລະກິດໜຶ່ງໆມີຖານະເປັນໄດ້ທັງຝ່າຍຊື້ ແລະ ຝ່າຍຂາຍສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດດັ່ງກ່າວ;
- ໃນຕະຫຼາດທີ່ບໍ່ເປັນທາງການ: ການເຮັດທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປ, ທະນາຄານທຸລະກິດຈະມີຖານະເປັນຝ່າຍຂາຍສັນຍາສິດ, ສ່ວນສະຖາບັນການເງິນ ແລະ ລູກຄ້າທົ່ວໄປຈະມີຖານະເປັນແຕ່ຝ່າຍຊື້ສັນຍາສິດເທົ່ານັ້ນ ຊຶ່ງສາມາດຊື້ໄດ້ທັງສິດໃນການຊື້ເງິນຕາຕ່າງປະເທດ (FX Call Opiton) ແລະ ສິດໃນການຂາຍເງິນຕາຕ່າງປະເທດ (FX Put Opiton).

**ມາດຕາ 10 ເງື່ອນໄຂໃນການດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ**

ທະນາຄານທຸລະກິດ ທີ່ມີຈຸດປະສົງຈະດໍາເນີນທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຕ້ອງມີເງື່ອນໄຂດັ່ງນີ້:

1. ການດໍາເນີນທຸລະກໍາແມ່ນມີເປົ້າໝາຍເພື່ອປ້ອງກັນຄວາມສ່ຽງຈາກອັດຕາແລກປ່ຽນ ຫຼື ບໍລິຫານສະພາບຄ່ອງເງິນຕາຕ່າງປະເທດເທົ່ານັ້ນ;
2. ຕ້ອງມີຄວາມພ້ອມທາງດ້ານແຫຼ່ງເງິນທຶນທັງສະກຸນເງິນກີບ ແລະ ເງິນຕາຕ່າງປະເທດທີ່ຈະນໍາໃຊ້ເພື່ອດໍາເນີນທຸລະກໍາດັ່ງກ່າວຢ່າງພຽງພໍ;
3. ການດໍາເນີນທຸລະກິດຕ້ອງມີຄວາມໂປ່ງໃສ ແລະ ຢູ່ບົນພື້ນຖານລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ;
4. ຕ້ອງມີອຸປະກອນເຄື່ອງມື ຫຼື ໂປຼແກຼມຮອງຮັບການດໍາເນີນທຸລະກໍາດັ່ງກ່າວຕາມທີ່ ທຫລ ກໍານົດໃຫ້ນໍາໃຊ້ໃນແຕ່ລະໄລຍະ;

5. ຕ້ອງແຕ່ງຕັ້ງຜູ້ຕາງໜ້າທະນາຄານທຸລະກິດຕົນເພື່ອເຮັດໜ້າທີ່ດຳເນີນທຸລະກຳດັ່ງກ່າວຢ່າງເປັນລາຍລັກອັກສອນ;
6. ການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດໃນຕະຫຼາດທີ່ບໍ່ເປັນທາງການນັ້ນ ທະນາຄານທຸລະກິດຕ້ອງມີລະບຽບການເປັນອັນສະເພາະຂອງທະນາຄານຕົນເອງເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ແຕ່ຕ້ອງຢູ່ບົນພື້ນຖານລະບຽບທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014 ແລະ ລະບຽບການຕ່າງໆທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ, ຊຶ່ງລະບຽບສະເພາະກ່ຽວກັບການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດທີ່ທະນາຄານທຸລະກິດສ້າງຂຶ້ນນັ້ນຕ້ອງຜ່ານການເຫັນດີຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 11 ການກຳນົດອັດຕາໃຊ້ສິດ (Strike rate)**

ກໍລະນີທະນາຄານທຸລະກິດເຮັດທຸລະກຳກັບທະນາຄານແຫ່ງ ສປປ ລາວ, ອັດຕາໃຊ້ສິດໃນການເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ແມ່ນ ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ກຳນົດ;

ກໍລະນີທະນາຄານທຸລະກິດເຮັດທຸລະກຳກັບທະນາຄານທຸລະກິດດ້ວຍກັນທີ່ເປັນສະມາຊິກຢູ່ໃນຕະຫຼາດລະຫວ່າງທະນາຄານ ແມ່ນທະນາຄານທຸລະກິດທີ່ມີຖານະເປັນຝ່າຍຂາຍສິດຈະເປັນຜູ້ກຳນົດອັດຕາໃຊ້ສິດດັ່ງກ່າວ;

ກໍລະນີທະນາຄານທຸລະກິດເຮັດທຸລະກຳກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປຢູ່ໃນຕະຫຼາດທີ່ບໍ່ເປັນທາງການ, ອັດຕາໃຊ້ສິດດັ່ງກ່າວແມ່ນທະນາຄານທຸລະກິດຈະເປັນຜູ້ກຳນົດ.

**ມາດຕາ 12 ການກຳນົດລາຄາຊື້ສິດ (Option Premium)**

ກໍລະນີທະນາຄານທຸລະກິດເຮັດທຸລະກຳກັບທະນາຄານແຫ່ງ ສປປ ລາວ, ລາຄາໃຊ້ສິດໃນການເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ແມ່ນ ທະນາຄານແຫ່ງ ສປປ ລາວ ຈະເປັນຜູ້ກຳນົດ;

ສ່ວນກໍລະນີທະນາຄານທຸລະກິດເຮັດທຸລະກຳກັບທະນາຄານທຸລະກິດດ້ວຍກັນທີ່ເປັນສະມາຊິກຢູ່ໃນຕະຫຼາດລະຫວ່າງທະນາຄານ ແມ່ນທະນາຄານທຸລະກິດທີ່ມີຖານະເປັນຝ່າຍຂາຍສິດຈະເປັນຜູ້ກຳນົດລາຄາຊື້ສິດດັ່ງກ່າວບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ;

ສຳລັບກໍລະນີທະນາຄານທຸລະກິດເຮັດທຸລະກຳກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປຢູ່ໃນຕະຫຼາດທີ່ບໍ່ເປັນທາງການ, ລາຄາຊື້ສິດດັ່ງກ່າວແມ່ນທະນາຄານທຸລະກິດຈະເປັນຜູ້ກຳນົດ.

**ມາດຕາ 13 ຄ່າທຳນຽມການດຳເນີນທຸລະກຳ**

ທະນາຄານແຫ່ງ ສປປ ລາວ ຈະຄິດໄລ່ຄ່າທຳນຽມໃນການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດນຳທະນາຄານທຸລະກິດໃນແຕ່ລະຄັ້ງຕາມອັດຕາທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;

ກໍລະນີເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານທຸລະກິດ ກັບທະນາຄານທຸລະກິດດ້ວຍກັນ ຫຼື ລະຫວ່າງທະນາຄານທຸລະກິດກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປ ຄ່າທຳນຽມແມ່ນ ທະນາຄານທຸລະກິດທີ່ມີຖານະເປັນຝ່າຍຂາຍສິດເປັນຜູ້ກຳນົດ, ແຕ່ສູງສຸດບໍ່ໃຫ້ເກີນ 0,025% ຂອງວົງເງິນທີ່ສະເໜີຊື້ ຫຼື ຂາຍຕໍ່ທຸລະກຳ ໂດຍການເກັບຄ່າທຳນຽມດັ່ງກ່າວຕ້ອງລະບຸຢ່າງຈະແຈ້ງໃສ່ໃນສັນຍາ ພ້ອມທັງແຈ້ງໃຫ້ຄູ່ສັນຍາຮັບຮູ້ພັນທະດັ່ງກ່າວກ່ອນຕົກລົງເຮັດສັນຍາ.

### ມາດຕາ 14 ການຊໍາລະເງິນຊື້ສິດ ແລະ ເງິນຄ່າທໍານຽມ

ພາຍຫຼັງທີ່ຝ່າຍຊື້ ແລະ ຝ່າຍຂາຍຕົກລົງເຮັດສັນຍາກັນແລ້ວ, ຝ່າຍຊື້ຕ້ອງໄດ້ຊໍາລະເງິນເພື່ອຊື້ສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ແລະ ຄ່າທໍານຽມດໍາເນີນທຸລະກໍາ (ຖ້າມີ) ໃຫ້ແກ່ຝ່າຍຂາຍສິດໃນມື້ເຮັດສັນຍາຕາມລາຄາຊື້ສິດທີ່ໄດ້ຕົກລົງກັນໄວ້ໃນສັນຍາ. ສໍາລັບຄ່າທໍານຽມຕ້ອງຊໍາລະເປັນສະກຸນເງິນກີບຕາມອັດຕາແລກປ່ຽນຂອງກົມບໍລິການທະນາຄານ ຫຼື ທະນາຄານທຸລະກິດ ກໍານົດອອກໃນມື້ເຮັດສັນຍາ.

ໃນກໍລະນີຊໍາລະເປັນເງິນຕາຕ່າງປະເທດ, ຖ້າເປັນທຸລະກໍາທີ່ເຮັດລະຫວ່າງທະນາຄານແຫ່ງ ສປປ ລາວ ກັບທະນາຄານທຸລະກິດ ແມ່ນໃຫ້ນໍາໃຊ້ອັດຕາແລກປ່ຽນທັນທີ (Spot rate) ຂອງກົມບໍລິການທະນາຄານໃນມື້ເຮັດສັນຍາ ແລະ ຖ້າເປັນທຸລະກໍາລະຫວ່າງທະນາຄານທຸລະກິດກັບທະນາຄານທຸລະກິດ, ສະຖາບັນການເງິນ ແລະ ລູກຄ້າທົ່ວໄປ ແມ່ນໃຫ້ນໍາໃຊ້ອັດຕາແລກປ່ຽນທັນທີ (Spot rate) ໃນມື້ເຮັດສັນຍາຂອງທະນາຄານທຸລະກິດທີ່ເປັນຝ່າຍຂາຍສິດມາກໍານົດ.

### ມາດຕາ 15 ການຊໍາລະສະສາງ

ກໍລະນີທະນາຄານແຫ່ງ ສປປ ລາວ ເຮັດທຸລະກໍາກັບທະນາຄານທຸລະກິດ: ການຊໍາລະສະສາງແມ່ນຈະເຮັດຜ່ານການຕັດບັນຊີເງິນຝາກກະແສລາຍວັນຂອງທະນາຄານທຸລະກິດ ທີ່ເປີດໄວ້ຢູ່ກົມບໍລິການທະນາຄານ;

ກໍລະນີທະນາຄານທຸລະກິດດໍາເນີນທຸລະກໍາໃນຕະຫຼາດຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ (Interbank): ການຊໍາລະສະສາງແມ່ນຈະເຮັດຜ່ານການຕັດບັນຊີເງິນຝາກຂອງທະນາຄານທຸລະກິດທີ່ຝາກໄວ້ຢູ່ກົມບໍລິການທະນາຄານພາຍໃນມື້ຄົບກໍານົດ.

ກໍລະນີທະນາຄານທຸລະກິດດໍາເນີນທຸລະກໍານໍາສະຖາບັນການເງິນ ແລະ ລູກຄ້າທົ່ວໄປ ການຊໍາລະສະສາງແມ່ນຂຶ້ນຢູ່ກັບເງື່ອນໄຂທີ່ທະນາຄານທຸລະກິດເປັນຜູ້ກໍານົດເອງ.

### ມາດຕາ 16 ລະບອບການລາຍງານ

ທະນາຄານທຸລະກິດຕ້ອງລາຍງານຂໍ້ມູນທຸກໆການເຄື່ອນໄຫວທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຂອງຕົນໃຫ້ແກ່ທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ) ຊາບເປັນປະຈໍາວັນ, ອາທິດ, ເດືອນ ແລະ ປີຢ່າງເປັນປົກກະຕິ.

ກົມບໍລິການທະນາຄານ ຕ້ອງລາຍງານການເຮັດທຸລະກໍາສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດກັບບັນດາທະນາຄານທຸລະກິດ ໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ກົມນະໂຍບາຍເງິນຕາ ຊາບເປັນປະຈໍາວັນ, ອາທິດ, ເດືອນ ແລະ ປີ ຢ່າງເປັນປົກກະຕິ.

### ມາດຕາ 17 ຂໍ້ຫ້າມໃນການເຮັດສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ

- ການກໍານົດອັດຕາແລກປ່ຽນຂອງທະນາຄານທຸລະກິດບໍ່ໃຫ້ເກີນຂອບທີ່ ທຫລ ກໍານົດ;
- ຫ້າມທະນາຄານທຸລະກິດຍົກເລີກການເຮັດທຸລະກໍາສັນຍາສິດທີ່ໄດ້ມີການຕົກລົງ ແລະ ເຫັນດີແລ້ວ ໂດຍບໍ່ມີເຫດຜົນພຽງພໍເກີນ 2 ຄັ້ງ;
- ຫ້າມທະນາຄານທຸລະກິດທີ່ບໍ່ມີຄວາມພ້ອມທາງດ້ານແຫຼ່ງເງິນທຶນເຂົ້າເຮັດສັນຍາສິດ;
- ຫ້າມທະນາຄານທຸລະກິດເຮັດສັນຍາສິດເພື່ອປັ່ນປ່ວນຕະຫຼາດຊື້-ຂາຍເງິນຕາຕ່າງປະເທດ.

ມາດຕາ 18 ມາດຕະການຕໍ່ຜູ້ລະເມີດສັນຍາ

ທະນາຄານທຸລະກິດເຮັດທຸລະກຳກັບທະນາຄານແຫ່ງ ສປປ ລາວ ແລ້ວບໍ່ປະຕິບັດຕາມສັນຍາຈະຖືກມາດຕະການປັບໃໝດັ່ງນີ້:

1) ກໍລະນີດັດແກ້ ຫຼື ຍົກເລີກສັນຍາ:

ພາຍຫຼັງເຮັດສັນຍາແລ້ວ ຫາກທະນາຄານທຸລະກິດມີຈຸດປະສົງຢາກດັດແກ້ ຫຼື ຍົກເລີກສັນຍາກ່ອນກຳນົດຈະຖືກດຳເນີນການປັບໃໝດັ່ງນີ້:

– ດັດແກ້ສັນຍາຖ້າເຫັນດີໃນຄູ່ສັນຍາກໍສາມາດປະຕິບັດໄດ້, ຖ້າຫາກຄູ່ສັນຍາຫາກບໍ່ເຫັນດີຕ້ອງມີການປັບໃໝຄື: ຈຳນວນເງິນປັບໃໝ ເທົ່າກັບ ຈຳນວນເງິນທີ່ຜິດນັດໃນສັນຍາ ຄູນ ສ່ວນຕ່າງອັດຕາແລກປ່ຽນຊື້-ຂາຍເງິນຕາຕ່າງປະເທດທີ່ກຳນົດໄວ້ໃນສັນຍາດັ່ງກ່າວທຽບໃສ່ອັດຕາແລກປ່ຽນປະຈຸບັນຂອງຝ່າຍທີ່ປະຕິບັດສັນຍາ (ອັດຕາດັ່ງກ່າວຕ້ອງຢູ່ໃນຂອບເຂດທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ);

– ຍົກເລີກສັນຍາຈະຖືກປັບໃໝຄື: ຈຳນວນເງິນປັບໃໝ ເທົ່າກັບ ຈຳນວນເງິນທີ່ຜິດນັດໃນສັນຍາ ຄູນອັດຕາດອກເບ້ຍເງິນກູ້ໄລຍະດຽວກັນ ຫຼື ຊ່ວງໄຕມາດດຽວກັນ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກແຕ່ລະໄລຍະ ຄູນຈຳນວນມື້ຜິດນັດ ແລະ ຫານດ້ວຍ 365 ວັນ.

2) ກໍລະນີຜິດນັດການຊຳລະເງິນ ຈະຖືກປັບໃໝດັ່ງນີ້:

– ສຳລັບເງິນສະກຸນກີບ:

- ຊຳລະຊ້າພາຍໃນ 7 ວັນ ຈະຖືກປັບໃໝຄື: ອັດຕາດອກເບ້ຍເງິນກູ້ໄລຍະສັ້ນ 7 ວັນຂອງທະນາຄານແຫ່ງ ສປປ ລາວ ຄູນ 150% ຄູນຈຳນວນເງິນກີບທີ່ຕ້ອງຊຳລະ ຄູນ ຈຳນວນມື້ທີ່ຜິດນັດ ແລະ ຫານ 360 ວັນ;
- ຊຳລະຊ້າເກີນ 7 ວັນ ຈະຖືກປັບໃໝຄື: ອັດຕາດອກເບ້ຍເງິນກູ້ໄລຍະສັ້ນເກີນ 7 ວັນຂອງທະນາຄານແຫ່ງ ສປປ ລາວ ຄູນ 180% ຄູນໃຫ້ຈຳນວນເງິນກີບທີ່ຕ້ອງຊຳລະ ຄູນ ຈຳນວນມື້ທີ່ຜິດນັດ ແລະ ຫານ 360 ວັນ;
- ການຄິດໄລ່ຈຳນວນມື້ຜິດນັດ ແມ່ນໃຫ້ຖືເອົາ 15:00 ໂມງເປັນເວລາສຸດທ້າຍໃນການຊຳລະ; ການຊຳລະພາຍຫຼັງ 15:00 ໂມງ ໃຫ້ຖືເປັນມື້ໃໝ່.

– ສຳລັບສະກຸນເງິນໂດລາ: ຈະຖືກປັບໃໝຕາມອັດຕາດອກເບ້ຍເງິນກູ້ 1 ປີ ສະເລ່ຍທົ່ວລະບົບທະນາຄານທຸລະກິດ ສະກຸນເງິນໂດລາ ໃນແຕ່ລະໄລຍະຄື:

- ອັດຕາດອກເບ້ຍເງິນກູ້ 1 ປີ ສະເລ່ຍທົ່ວລະບົບທະນາຄານທຸລະກິດ ຄູນ ຈຳນວນເງິນໂດລາທີ່ຕ້ອງຊຳລະ ຄູນ ຈຳນວນມື້ທີ່ຜິດນັດ ແລະ ຫານ 360 ວັນ;
- ການຄິດໄລ່ຈຳນວນມື້ທີ່ຜິດນັດ ແມ່ນໃຫ້ຖືເອົາ 15:00 ໂມງ ເປັນເວລາສຸດທ້າຍໃນການຊຳລະ; ການຊຳລະພາຍຫຼັງ 15:00 ໂມງ ໃຫ້ຖືເປັນມື້ໃໝ່.

– ສຳລັບສະກຸນເງິນບາດ: ຈະຖືກປັບໃໝໃນອັດຕາດອກເບ້ຍເງິນກູ້ 1 ປີ ສະເລ່ຍທົ່ວລະບົບທະນາຄານທຸລະກິດ ໃນແຕ່ລະໄລຍະຄື:

- ອັດຕາດອກເບ້ຍເງິນກູ້ 1 ປີ ສະເລ່ຍທົ່ວລະບົບທະນາຄານທຸລະກິດ ຄູນ ຈຳນວນເງິນບາດທີ່ຕ້ອງຊຳລະ ຄູນ ຈຳນວນມື້ທີ່ຜິດນັດ ແລະ ຫານ 360 ວັນ;

- ການຄິດໄລ່ຈຳນວນມື້ທີ່ຜິດນັດ ແມ່ນໃຫ້ຖືເອົາ 15:00 ໂມງເປັນເວລາສຸດທ້າຍໃນການຊຳລະ; ການສົ່ງມອບພາຍຫຼັງ 15:00 ໂມງ ໃຫ້ຖືເປັນມື້ໃໝ່.

ສຳລັບທະນາຄານທຸລະກິດເຮັດທຸລະກຳກັບທະນາຄານທຸລະກິດດ້ວຍກັນໂດຍຜ່ານໂປຼແກຼມຊື້-ຂາຍເງິນຕາຕ່າງປະເທດລະຫວ່າງທະນາຄານ, ຫາກຝ່າຍຊື້ບໍ່ປະຕິບັດຕາມສັນຍາຈະຖືກຝ່າຍຂາຍທີ່ເປັນຄູ່ສັນຍາປັບໄໝດັ່ງນີ້:

1) ກໍລະນີດັດແກ້ ຫຼື ຍົກເລີກສັນຍາ: ພາຍຫຼັງທີ່ຕົກລົງເຮັດສັນຍາແລ້ວ ຫາກຝ່າຍຊື້ຕ້ອງການດັດແກ້ ຫຼື ຍົກເລີກສັນຍາ ໂດຍບໍ່ໄດ້ຮັບການເຫັນດີຈາກຄູ່ສັນຍາ, ຈະຖືກປັບໄໝເປັນເງິນຈຳນວນ ແຕ່ 1.000.000 ກີບ ຫາ 10.000.000 ກີບ;
2) ກໍລະນີຜິດນັດການຊຳລະເງິນ ຈະຖືກປັບໄໝດັ່ງນີ້:

   ອັດຕາປັບໄໝ ≤ (ອັດຕາດອກເບ້ຍໃນສັນຍາ x 150%)

   ເງິນປັບໄໝ = ((ຈຳນວນເງິນຜິດນັດໃນສັນຍາ x ຈຳນວນວັນຜິດນັດ) x ອັດຕາປັບໄໝ)/360 ວັນ

ສ່ວນທະນາຄານທຸລະກິດເຮັດທຸລະກຳກັບສະຖາບັນການເງິນ ແລະ ລູກຄ້າທົ່ວໄປ, ທະນາຄານທຸລະກິດສາມາດປັບໄໝລູກຄ້າທີ່ລະເມີດສັນຍາໄດ້ກໍຕໍ່ເມື່ອໄດ້ມີການກຳນົດມາດຕະການປັບໄໝໃນສັນຍາດັ່ງກ່າວ, ໂດຍການປັບໄໝແມ່ນຕ້ອງປະຕິບັດຕາມລະບຽບທີ່ທະນາຄານທຸລະກິດກຳນົດອອກ, ຊຶ່ງອັດຕາການປັບໄໝສູງສຸດບໍ່ໃຫ້ເກີນ 150% ຂອງອັດຕາດອກເບ້ຍທີ່ກຳນົດໄວ້ໃນສັນຍາ, ສ່ວນການປັບໄໝແມ່ນປະຕິບັດດັ່ງນີ້:

1) ກໍລະນີດັດແກ້ ຫຼື ຍົກເລີກສັນຍາ: ທະນາຄານທຸລະກິດສາມາດປັບໄໝເປັນເງິນຈຳນວນ ແຕ່ 1.000.000 ກີບ ຫາ 10.000.000 ກີບ;
2) ກໍລະນີຜິດນັດການຊຳລະເງິນ: ທະນາຄານທຸລະກິດສາມາດປັບໄໝໂດຍອີງໃສ່ວິທີການຄິດໄລ່ດັ່ງນີ້:

   ອັດຕາປັບໄໝ ≤ (ອັດຕາດອກເບ້ຍໃນສັນຍາ x 150%)

   ເງິນປັບໄໝ = ((ຈຳນວນເງິນຄ້າງຊຳລະ x ຈຳນວນວັນຄ້າງຊຳລະ) x ອັດຕາປັບໄໝ)/360 ວັນ

## ໝວດທີ 4
## ໜ້າທີ່ຮັບຜິດຊອບຂອງພາກສ່ວນທີ່ກ່ຽວຂ້ອງ

**ມາດຕາ 19 ກົມນະໂຍບາຍເງິນຕາ**

ໜ້າທີ່ຮັບຜິດຊອບຂອງກົມນະໂຍບາຍເງິນຕາມີດັ່ງນີ້:

– ເປັນເຈົ້າການໃນການຄົ້ນຄ້ວາ, ສ້າງ ແລະ ປັບປຸງ ລະບຽບສະບັບນີ້ ແລະ ບັນດາລະບຽບການຕ່າງໆທີ່ກ່ຽວຂ້ອງກັບການເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ໃນແຕ່ລະໄລຍະເມື່ອເຫັນວ່າມີຄວາມຈຳເປັນ;
– ຄຸ້ມຄອງການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ມີປະສິດທິຜົນ;

- ຕິດຕາມ, ເກັບກຳການດຳເນີນທຸລະກຳດັ່ງກ່າວຂອງທະນາຄານທຸລະກິດກັບລູກຄ້າ, ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານທຸລະກິດ ແລະ ທະນາຄານທຸລະກິດດ້ວຍກັນ ເພື່ອເປັນຖານຂໍ້ມູນໃນການປັບປຸງນິຕິກຳທີ່ຕິດພັນໃນແຕ່ລະໄລຍະ.

**ມາດຕາ 20 ກົມບໍລິການທະນາຄານ**

ໜ້າທີ່ຮັບຜິດຊອບຂອງກົມບໍລິການທະນາຄານມີດັ່ງນີ້:

- ອອກບົດແນະນຳກ່ຽວກັບການເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດໃຫ້ແກ່ທະນາຄານທຸລະກິດເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດເປັນແຕ່ລະໄລຍະ;
- ເປັນເຈົ້າການຄົ້ນຄ້ວາຂໍ້ສະເໜີເຮັດທຸລະກຳ ແລະ ດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດກັບບັນດາທະນາຄານທຸລະກິດໃນຖານະເປັນຜູ້ດັດສົມແຫຼ່ງສຸດທ້າຍ;
- ຕິດຕາມ, ເກັບກຳ ແລະ ລາຍງານການດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຂອງທະນາຄານທຸລະກິດກັບທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດໃນຕະຫຼາດລະຫວ່າງທະນາຄານ (Interbank) ແລ້ວລາຍງານໃຫ້ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ແລະ ກົມນະໂຍບາຍເງິນຕາຊາບເປັນແຕ່ລະໄລຍະ.

**ມາດຕາ 21 ກົມຄຸ້ມຄອງທະນາຄານທຸລະກິດ**

ໜ້າທີ່ຮັບຜິດຊອບຂອງກົມຄຸ້ມຄອງທະນາຄານທຸລະກິດມີດັ່ງນີ້:

- ເປັນເຈົ້າການໃນການຄົ້ນຄ້ວາ ແລະ ອະນຸຍາດໃຫ້ທະນາຄານທຸລະກິດດຳເນີນທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດກັບສະຖາບັນການເງິນ, ນິຕິບຸກຄົນ ແລະ ບຸກຄົນ ກ່ອນຈະໄດ້ມີການເປີດບໍລິການສັນຍາສິດໃນການຊື້ຫຼື ຂາຍເງິນຕາຕ່າງປະເທດນີ້;
- ຕິດຕາມ, ກວດກາການເຄື່ອນໄຫວທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຂອງບັນດາທະນາຄານທຸລະກິດໃຫ້ສອດຄ່ອງກັບລະບຽບການທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ;
- ມີສິດກ່າວເຕືອນ ແລະ ປັບໃໝຕໍ່ບັນດາທະນາຄານທຸລະກິດທີ່ລະເມີດຕໍ່ລະບຽບທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະຢ່າງເຂັ້ມງວດ;
- ລາຍງານຜົນການຕິດຕາມ, ກວດກາການເຄື່ອນໄຫວເຮັດທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດຂອງທະນາຄານທຸລະກິດຕິດພັນກັບວຽກງານຄວາມໝັ້ນຄົງຂອງລະບົບທະນາຄານໃຫ້ຄະນະຜູ້ອຳນວຍການທະນາຄານແຫ່ງ ສປປ ລາວ ແລະ ແຈ້ງໃຫ້ກົມນະໂຍບາຍເງິນຕາຊາບໃນແຕ່ລະໄລຍະ;
- ໄດ້ຮັບບົດລາຍງານ, ຂໍ້ມູນຈາກກົມກ່ຽວຂ້ອງກັບການເຄື່ອນໄຫວເຮັດທຸລະກຳດັ່ງກ່າວ ຫຼື ຮຽກຮ້ອງຂໍ້ມູນຈາກທະນາຄານທຸລະກິດກ່ຽວຂ້ອງຖ້າເຫັນວ່າຈຳເປັນ.

**ມາດຕາ 22 ກົມບັນຊີແລະການເງິນ**

ໜ້າທີ່ຮັບຜິດຊອບຂອງກົມບັນຊີແລະການເງິນມີດັ່ງນີ້:

- ສ້າງຫົວບັນຊີ ແລະ ອອກບົດແນະນຳກ່ຽວກັບຂັ້ນຕອນການລົງບັນຊີການເຄື່ອນໄຫວທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດໃນການຈັດຕັ້ງປະຕິບັດ.

ມາດຕາ 23 ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ໜ້າທີ່ຮັບຜິດຊອບຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານມີດັ່ງນີ້:

– ມີໜ້າທີ່ສ້າງ ແລະ ພັດທະນາໂປຼແກຼມການເຮັດສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ເພື່ອເຊື່ອມຕໍ່ເຄືອຄ່າຍລະຫວ່າງກົມບໍລິການທະນາຄານກັບບັນດາທະນາຄານທຸລະກິດໃນການຕິດຕາມການເຄື່ອນໄຫວທຸລະກຳດັ່ງກ່າວ.

ມາດຕາ 24 ທະນາຄານທຸລະກິດ

ໜ້າທີ່ຮັບຜິດຊອບຂອງທະນາຄານທຸລະກິດມີດັ່ງນີ້:

– ຈັດຕັ້ງປະຕິບັດລະບຽບສະບັບນີ້ ແລະ ນຳໃຊ້ເປັນບ່ອນອີງໃນການດຳເນີນການເຄື່ອນໄຫວທຸລະກຳສັນຍາສິດໃນການຊື້ ຫຼື ຂາຍເງິນຕາຕ່າງປະເທດ ເພື່ອປ້ອງກັນຄວາມສ່ຽງດ້ານອັດຕາແລກປ່ຽນກັບລູກຄ້າຂອງຕົນ.

– ລາຍງານການດຳເນີນທຸລະກຳດັ່ງກ່າວຂອງຕົນມາຍັງທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ ແລະ ກົມບໍລິການທະນາຄານ) ຊາບເປັນປະຈຳວັນ, ອາທິດ, ເດືອນ ແລະ ປີ ຢ່າງເຂັ້ມງວດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 25 ການຈັດຕັ້ງປະຕິບັດ

ທຸກພາກສ່ວນທີ່ກ່ຽວຂ້ອງຂອງທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດຈົ່ງເຂົ້າໃຈ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 26 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ສອນໄຊ ສິດພະໄຊ